**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ພະແນກສຶກສາທິການ ແລະ ກິລາແຂວງ

ເລກທີ.....752........./ສກຂ

ອັດຕະປື, ວັນທີ.31.ກໍລະກົດ2018

## ໜັງສືແຈ້ງການ

**ຮຽນ:** ທ່ານຫົວໜ້າຫ້ອງວ່າການປົກຄອງແຂວງ, ຫົວໜ້າພະແນກການຕ່າງໆອ້ອມຂ້າງແຂວງ, ຫົວໜ້າຫ້ອງການສຶກສາ ແລະ ກິລາເມືອງ 5 ເມືອງ ແລະ ຜູ້ອຳນວຍການໂຮງຮຽນ ມສ ທີ່ຂຶ້ນກັບ.

**ເລື່ອງ:** ການສະໝັກທຶນການສຶກສາ ລະດັບປະລິນຍາໂທ ທີ່ ປະເທດ ສສ ຫວຽດນາມ ປະຈຳປີ 2018-2019

- ອີງຕາມ: ບົດບັນທຶກ ກອງປະຊຸມປຶກສາຫາລືກະກຽມການຄັດເລືອກເອົາພະນັກງານໄປຮຽນ, ການສອບເສັງຄັດເລືອກເອົານັກຮຽນຈົບຊັ້ນ ມ7 ໄປຮຽນຕໍ່ວິຊາຊີບ ທີ່ ສສ ຫວຽດນາມ ປະຈຳສົກປີ 2018-2019. ສະບັບລົງວັນທີ 19 ກໍລະກົດ 2018.

ພະແນກສຶກສາທິການ ແລະ ກິລາແຂວງ ໃນນາມຕົວແທນຈຸດປະສານງານ ແລະ ກອງເລຂາ ຄະນະຮັບຜິດຊອບຂັ້ນແຂວງ ເພື່ອພັດທະນາຊັບພະຍາກອນມະນຸດ (ຄພຊບ) ຂໍຖືເປັນກຽດແຈ້ງການມາຍັງທ່ານຊາບວ່າ: ສສ ຫວຽດນາມ ໄດ້ໃຫ້ທຶນການສຶກສາ ລະດັບປະລິນຍາໂທ ປະຈຳສົກປີ 2018-2019 ໂດຍຜ່ານກະຊວງການສຶກສາ ແລະ ກິລາ ຈຳນວນ 7 ທຶນຄື:

① ວິທະຍາສາດຄອມພິວເຕີ ຈຳນວນ 1 ທຶນ ເປັນທຶນ 100%
② ພັດທະນາເສດຖະກິດ ຈຳນວນ 2 ທຶນ. ເປັນທຶນ 100% 1 ທຶນ ແລະ 50 % 1 ທຶນ.
③ ຄຸ້ມຄອງເສດຖະກິດ ຈຳນວນ 1 ທຶນ. ເປັນທຶນ 50 %
④ ລະບົບຂໍ້ມູນຂ່າວສານ ຈຳນວນ 1 ທຶນ ເປັນທຶນ 100%
⑤ ຄູເຄມີອົງຄະທາດ ຈຳນວນ 1 ທຶນ. ເປັນທຶນ 50 %
⑥ ຄູຄະນິດສາດ ຈຳນວນ 1 ທຶນ. ເປັນທຶນ 50 %

### ເງື່ອນໄຂຂອງຜູ້ສະໝັກ

- ຕ້ອງເປັນພະນັກງານລັດຖະກອນສົມບູນຢ່າງໜ້ອຍ 2 ປີຂຶ້ນໄປ.
- ຕ້ອງເປັນພະນັກງານຢູ່ໃນແຜນສ້າງເປັນພະນັກງານສືບທອດປ່ຽນແທນຂອງພະແນກການຕ່າງໆ.
- ຖ້າເປັນພະນັກງານທີ່ຮຽນຈົບປະລິນຍາຕີມາຈາກ ສສ ຫວຽດນາມ ຈະບໍ່ໄດ້ຜ່ານການກຽມພາສາຫວຽດອີກ ແມ່ນໄດ້ເຂົ້າຮຽນຕໍ່ປະລິນຍາໂທປີທີ 1 ເລີຍ.
- ຖ້າເປັນພະນັກງານທີ່ຮຽນຈົບປະລິນຍາຕີຢູ່ພາຍໃນປະເທດ ຈະໄດ້ກຽມພາສາຫວຽດ 1 ປີ.



Scanned with CamScanner